# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 20 ພຶສພາ 2018 ( 5-20-2018 )

---

## ຈົ່ງລຸກຂຶ້ນແລະເວົ້າ

| |
|---|
| *ທ່ານພັລນາປະສົບການ ການເວົ້າກັບສາທາຣະນະຂອງທ່ານຢ່າງໃດ ?* |

**ຈຸດສໍາຄັນໃນບົດຮຽນ**: ຈົ່ງກ້າຫານ, ແຕ່ຈົ່ງຝາກຝັງຮັບໄວ້ກັບພຣະເຈົ້າ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ເຊື່ອຫຼືບໍ່, ປະມານ 10 ເປີເຊັນໃນພວກເຮົາເທົ່ານັ້ນທີ່ຊອກຫາໂອກາດເວົ້າໃນສາທາຣະນະ, ອີກຟາກນຶ່ງຂອງແສງປະທີບ(spectrum)ນັ້ນ, ປະມານ 10 ເປີເຊັນໃນພວກເຮົາຈະຈັດເຂົ້າໃນກຸ່ມທີ່ຢ້ານແຮງ ແລະ ອີກ 80 ເປີເຊັນຂອງພວກເຮົາຈັດຢູ່ໃນຣະດັບບໍ່ຢາກເວົ້າໃນສາທາຣະນະ, ແຕ່ຈະເວົ້າຫາກມີຄວາມຈໍາເປັນ !

ມັນເປັນສິ່ງນຶ່ງ ເວລາທ່ານຖືກເອີ້ນເຂົ້າຮ່ວມກອງປະຊຸມເພື່ອຕອບຄໍາຖາມ ຫຼື ກ່າວບົດລາຍງານສັ້ນໆ; ພວກເຮົາບໍ່ມີເວລາກັງວົນ. ແຕ່ຖ້ານາຍບອກໃຫ້ເຮັດລາຍງານສໍາຄັນໃນສາມອາທິດ, ພວກເຮົາມີເວລາຄິດນານ ແລະ ການຄິດນັ້ນຈະເຮັດໃຫ້ເຮົາວິຕົກກັງວົນ !

ຄວາມວິຕົກກັງວົນນັ້ນກໍຍິ່ງທະວີຄູນຫຼາຍຫາກສິ່ງທີ່ເຮົາຈະເວົ້ານັ້ນຈະນໍາຜົນອັນສໍາຄັນມາໃຫ້.

ການກ້າຫານໃນການເວົ້າບໍ່ແມ່ນເຣື່ອງງ່າຍ. ກ້າເຮັດໃນສິ່ງຖືກຕ້ອງໃນສະພາບການທີ່ສຸ່ມສ່ຽງກໍບໍ່ແມ່ນເຣື່ອງງ່າຍຄືກັນ. ແລ້ວໃນພຣະທັມເອສະເທີ, ພວກເຮົາເຫັນຍິງຄົນນຶ່ງເຮັດທັງສອງສິ່ງ. ຊີວິດມີການເດີມພັນ. ຖ້ານາງບໍ່ເວົ້າແລະບໍ່ເຮັດຢ່າງກ້າຫານ, ຫຼາຍພັນຄົນຈະຕາຍ, ແຕ່ຖ້ານາງກະທໍາຢ່າງກ້າຫານອອກໄປແລ້ວມີການຜິດພາດຂຶ້ນມາເດ ເອີ.. ນາງອາດຈະເຮັດໃຫ້ສະຖານການເລວຮ້າຍລົງ.

**ພຣະຄັມພີກ່າວວ່າແນວໃດ**: ( ເບິ່ງຕາມຂໍ້ 1, ແລະ 2 )

### ການສຶກສາພຣະຄັມພີ

**1. <u>ເອສະເທີ 7:1-6</u>** :

*1 ກະສັດຈຶ່ງສະເດັດກັບຮາມານໄປຮ່ວມໃນງານກິນລ້ຽງກັບພຣະຣາຊິນີເອສະເທີ 2 ເມື່ອກໍາລັງດື່ມເຫຼົ້າອະງຸ່ນໃນວັນທີ*
*ສອງຢູ່ນັ້ນ ກະສັດໄດ້ກ່າວກັບເອສະເທີອີກວ່າ "ມະເຫສີເອສະເທີ ຄໍາຮ້ອງຂໍຂອງພຣະນາງຄືຫຍັງ? ແລະ ຄໍາທູນຂໍຂອງ*
*ພຣະນາງຄືຫຍັງ ເຮົາຈະປະທານໃຫ້ ແມ່ນເຖິງເຄິ່ງຣາຊອານາຈັກຂອງເຮົາກໍຈະໃຫ້ໄດ້" 3 ມະເຫສີເອສະເທີທູນຕອບວ່າ*
*"ຂ້າແດ່ກະສັດ ຖ້າຂ້ານ້ອຍເປັນທີ່ພໍພຣະທັຍໃນສາຍພຣະເນດຂອງພຣະອົງແລະຖ້າເປັນທີ່ພໍພຣະທັຍກະສັດໃນຄໍາທູນ*
*ຂໍຂອງຂ້ານ້ອຍຄືຂໍໂຜດຊີວິດຂອງຂ້ານ້ອຍ ແລະຊີວິດຂອງຊົນຊາດຂອງຂ້ານ້ອຍຕາມຄໍາອ້ອນວອນຂອງຂ້ານ້ອຍເທີນ*
*4 ເພາະພວກຜູ້ຂ້າຖືກຂາຍທັງຂ້ານ້ອຍ ແລະຊົນຊາດຂອງຂ້ານ້ອຍໃຫ້ຖືກທໍາລາຍ, ຖືກສັງຫານແລະໃຫ້ຖືກລ້າງຜານ;*
*ຖ້າພວກຜູ້ຂ້າຖືກຂາຍໃຫ້ເປັນຂ້າທາດຊາຍແລະຍິງ ຂ້ານ້ອຍກໍຈະອົດກັ້ນສງົບໄວ້ ເພາະຄວາມທຸກຍາກຂອງພວກຂ້າ*
*ນ້ອຍຈະປຽບກັບຜົນເສັຽຫາຍຂອງກະສັດນັ້ນກໍບໍ່ໄດ້" 5 ກະສັດເຊເຊັດຈຶ່ງກ່າວກັບມະເຫສີເອສະເທີວ່າ ( ຜູ້ທີ່ມີໃຈເຕັມ*
*ດ້ວຍຄວາມຄິດເຮັດຢ່າງນັ້ນແມ່ນຜູ້ໃດແລະຢູ່ໃສ) "ຜູ້ນັ້ນຄືໃຜ? ຢູ່ໃສ? ຈຶ່ງບັງອາດຄິດເຮັດການເຊັ່ນນີ້" 6 ແລະພຣະ*
*ນາງເອສະເທີທູນຕອບວ່າ "ສູ່ສັດຕຣູຄື ຮາມານ ຄົນໂຫດຮ້າຍຜູ້ນີ້" ຮາມານ ກໍສະດຸ້ງຕົກໃຈຢ້ານຢູ່ຕໍ່ໜ້າກະສັດ ແລະ*

*ມະເຫສີ.*

ເຫດການສອງສາມວັນກ່ອນສຍິບລິງຕໍ່ຊ່ວງນີ້ ການກະທຳທີ່ກ້າຫານໃນທີ່ສຸດນີ້. ມັນເປັນເວລາທີ່ຕ້ອງສະແດງທຸກຢ່າງອອກມາ, ແລະເອສະເທີກໍເຮັດຕົງຕາມນັ້ນ, ການເປີດເຜີຍທັງຊື່ສຽງຂອງຄົນຢິວແລະແຜນຊົ່ວຮ້າຍຂອງ ຮາມານ. ພຣະນາງໄດ້ອຸທອນຕໍ່ກະສັດໃຫ້ລົງມື, ໃນຂນະພຣະນາງອ້ອນວອນ, ອົດອາຫານ, ແລະ ໄຫວ້ວອນຕໍ່ພຣະເຈົ້າຂໍໃຫ້ລົງມື.

ພຣະເຈົ້າຊົງທຳງານຢູ່ແລ້ວ. ຄືນກ່ອນ, ກະສັດເຊເຊັດກໍນອນບໍ່ຫຼັບ. ເຣື່ອງນີ້ບໍ່ແມ່ນເຫດບັງເອີນເປັນແນ່, ແຕ່ໂຣກນອນບໍ່ຫຼັບເກີດຂຶ້ນຍ້ອນການດົນບັນດານຂອງພຣະເຈົ້າ. ໃນຂນະທີ່ນອນບໍ່ຫຼັບ ກະສັດໄດ້ຮັບລາຍງານປະຈຳວັນອ່ານໃຫ້ຟັງ ແລະພຣະອົງໄດ້ຍິນເຣື່ອງການກະທຳຂອງມໍເດກາຍທີ່ບໍ່ໄດ້ແຈ້ງຂ່າວໃຫ້ຊາບນັ້ນ(ເບິ່ງ ເອສະເທີ 6:1-3). ບາງທີກໍອາດຈະອາຍ ໂດຍບໍ່ໄດ້ໃຫ້ລາງວັນມໍເດກາຍຢ່າງຖືກຕ້ອງ, ກະສັດໄດ້ກຳຊັບໃຫ້ຮາມານໃຫ້ກຽດມໍເດກາຍ ຊຶ່ງເປັນບຸກຄົນທີ່ຮາມານກຽດຊັງທີ່ສຸດ! (ເບິ່ງເອສະເທີ 6:4-11).

ຂນະນີ້ ທີ່ງານລ້ຽງ, ກະສັດຮຽນຮູ້ວ່າ ທັງພຣະມະເຫສີຂອງພຣະອົງ ແລະຊາຍທີ່ພຣະອົງຈະໃຫ້ກຽດນັ້ນໄດ້ຖືກກຳນົດເວລາປະຫານໃຫ້ຕາຍ ແລະຊາຍທີ່ໂຕະນັ້ນແມ່ນຄົນທີ່ຫຼອກພຣະອົງເຂົ້າສູ່ການແບ່ງແຍກວິງການ.

| |
|---|
| ***ທ່ານໄດ້ພົບຄວາມສົນໃຈຫຍັງກ່ຽວກັບການຈັດການທັງໝົດຂອງເອສະເທີຕໍ່ເຫດການນີ້ ?*** |

ຮາມານຖືກປະຈານ, ແລະ ລາວ "ຢືນຂຶ້ນຕົວສັ່ນ." ພຣະທັມທີ່ນຳໃຊ້ເພື່ອບັລຍາຍປະຕິກິຣິຍາຂອງຮາມານເຄີຍຖືກໃຊ້ມາແລ້ວໃນພຣະສັນຍາເດີມ ລຳລັບຄວາມຢ້ານກົວແລະຕົວສັ່ນຂອງບຸກຄົນທີ່ມີປະສົບກັບການປະເຊີນທີ່ໃຫຍ່ (ເບິ່ງ 1ຂ່າວຄາວ 21:30; ດານີເອັນ 8:17). ຮາມານຮູ້ຈັກຄົນທີ່ໂກດແຄ້ນ ຄົນທີ່ມີອຳນາດສູງສຸດຂອງໂລກ ແລະເພິ່ນຢ້ານສັ່ນ.ເອສະເທີໄດ້ເປີດໂປງກິຈການມືດດ້ວຍຄວາມກ້າຫານຫຼາຍ, ແຕ່ພຣະນາງກໍໄດ້ເຮັດດ້ວຍປັນຍາເໝືອນກັນ.

1. ເອສະເທີບໍ່ໄດ້ຊີ້ນິ້ວມືຕຳໜິກະສັດ, ດ້ວຍວ່າ ກະສັດເຊເຊັດບໍ່ໄດ້ຕັ້ງໃຈເຊັນໃບສັ່ງຂ້າ. ພຣະນາງອຸທອນທັງສອງຢ່າງຕໍ່ຄວາມໄຮ້ດຽງສາຂອງພຣະອົງ ແລະຄວາມສົນໃຈແຕ່ຕົນເອງຂອງພຣະອົງ.ໃນຂໍ້ 4, ເອສະເທີເອີ່ຍເຖິງວ່າການທຳລາຍລ້າງຊາວຢິວອາດໝາຍເຖິງການສູນເສັຽກອງກຳລັງ ແລະເສຖກິດສ່ວນນຶ່ງອອກໄປ, ຊີ້ເຖິງການສູນເສັຽເສຖກິດສ່ວນໃຫຍ່ຂອງກະສັດ.
2. ເອີເທີເວົ້າໃນນາມຄົນອື່ນ. ພຣະນາງບໍ່ພຽງແຕ່ຕໍ່ສູ້ເພື່ອຊີວິດຂອງພຣະນາງເອງ ພຣະນາງເວົ້າເພື່ອຄົນທັງໝົດຂອງພຣະນາງ. ເອສະເທີເຂົ້າໄປໃນຄວາມທົນທຸກຂອງໄພ່ພົນຂອງພຣະນາງ.

ເອສະເທີອາດຈະຖືກຄອບງຳໃຫ້ຢ້ານກົວໃນຂນະນັ້ນ. ພຣະນາງອາດພຽງແຕ່ງຽບເສັຽຢູ່, ເຮັດບໍ່ຮູ້ບໍ່ເຫັນ ຄວາມບໍ່ຍຸດຕິທັມໃນເປີເຊັຍທີ່ຄຸກຄາມຊາວຢິວຂນະນັ້ນ. ແຕ່ພຣະນາງໄດ້ໃຊ້ໂອກາດທີ່ມີຢູ່ຕໍ່ໜ້າພຣະນາງນັ້ນອອກສຽງແທນປະຊາຊົນຂອງພຣະນາງ. ໃນຂັ້ນຕອນຕ່າງໆ, ພຣະນາງໄດ້ໃຫ້ຕົວຢ່າງອັນສຳຄັນແກ່ເຮົາໃນການດຳຣົງຊີວິດ ຕາມດັ່ງທີ່ທ່ານໂປໂລກ່າວວ່າ *"ຢ່າເຂົ້າສ່ວນກັບກິຈການຂອງຄວາມມືດທີ່ບໍ່ມີປໂຍດ ແຕ່ຈົ່ງເປີດເຜີຍກິຈການນັ້ນໃຫ້ປາກົດກໍດີວ່າ" (ເອເຟໂຊ 5:11).*

ຄຣິສຕຽນກໍມີໂອກາດກ່າວຕໍ່ຕ້ານຄວາມອະຍຸດຕິທັມເໝືອນກັນ. ພວກເຮົາບໍ່ມີຕຳແໜ່ງຣາຊາ, ແຕ່ພວກເຮົາທຸກຄົນມີສິດມີສຽງ. ຄົນບາງຄົນອາດຈະເລືອກບໍ່ສົນໃຈຄວາມອະຍຸດຕິທັມທີ່ມີຢູ່ຮອບຕົວເຂົາ. ຄົນອື່ນໆອາດຢາກປາກົດຕົວພຽງແຕ່ຝ່າຍວິນຍານເທົ່ານັ້ນ ສຸມໃສ່ພຽງແຕ່ປະກາດຂ່າວປະເສີດ ແລະນຳເອົາຄົນຂຶ້ນສວັນກໍພໍແລ້ວ. *"ຂ້າພະເຈົ້າບໍ່ເຂົ້າຮ່ວມເຣື່ອງນີ້. ຂ້າພຣະເຈົ້າພຽງແຕ່ເທສນາຂ່າວປະເສີດ ກໍພໍ."* ແຕ່ວ່າພຣະເຈົ້າເອີ້ນເຮົາໃຫ້ຫຼຽວແລຄົນອື່ນນຳ.

ເມື່ອມີເວລາພວກເຮົາຕ້ອງອະທິຖານແລະສະແດງອອກ. ເມື່ອເຮົາພົບເວລາເຮົາຕ້ອງໃຊ້ສຽງຂອງເຮົາ ອອກສຽງແທນຄົນທີ່ບໍ່ສົນ, ຄົນບໍ່ທັນບັງເກີດໃໝ່, ຄົນຍ້າຍມາໃໝ່, ຄົນກຸ່ມນ້ອຍ, ຫຼືຄົນຕ່ຳຕ້ອຍ. ພວກເຮົາສາມາດເປັນປາກສຽງແທນພວກທີ່ເຈັບປວດໃນຖ້າມກາງພວກເຮົາ.

| |
|---|
| ***ມີຄວາມຢ້ານກົວໃດແດ່ທີ່ມັກເກີດກັບເຮົາບໍ່ໃຫ້ເຮົາເວົ້າຕໍ່ຕ້ານຄວາມມືດຮອບຕົວເຮົາ ?*** |

**2. <u>ເອສະເທີ 7:7-10</u>:**

*[7]ກະສັດໄດ້ລຸກຂຶ້ນຈາກການກິນລ້ຽງດ້ວຍຄວາມຢາກຮ້າຍ ແລ້ວສະເດັດເຂົ້າໄປໃນຣາຊອຸທະຍານ ແຕ່ຮາມານຍັງຢູ່ເພື່ອທູນຂໍຊີວິດຈາກພຣະຣາຊີນີເອສະເທີ ເພາະຕົນເຫັນວ່າກະສັດໄດ້ມຸ້ງຮ້າຍຕໍ່ຕົນແລ້ວ [8]ເມື່ອກະສັດສະເດັດກັບຈາກຣາຊອຸທະຍານມາຍັງບ່ອນຊຶ່ງມີການກິນລ້ຽງ ຝ່າຍຮາມານຍັງຂາບຢູ່ທີ່ແທ່ນ ຊຶ່ງພຣະນາງເອສະເທີປະທັບຢູ່ນັ້ນ ກະສັດກ່າວວ່າ "ລາວຍັງຈະຂົ່ມຂືນພຣະຣາຊີນີຕໍ່ໜ້າຕໍ່ຕາເຮົາໃນເຮືອນຂອງເຮົາບໍ່? " ພໍຄຳເວົ້າຫລຸດອອກຈາກພຣະໂອດກະສັດ, ພວກເຂົາກໍເອົາຜ້າມາປົກໜ້າຂອງຮາມານ [9]ຮາໂບນາ ຊາຍຕອນຄົນໜຶ່ງທູນຕໍ່ພຣະພັກກະສັດວ່າ "ເບິ່ງແມ ບ່ອນແຂວນຄໍຊຶ່ງຮາມານຕຽມໄວ້ສຳລັບມໍເດກາຍ ຜູ້ທີ່ໄດ້ຊ່ວຍຊີວິດຂອງກະສັດ ກໍຍັງຕັ້ງຢູ່ທີ່ເຮືອນຂອງ ຮາມານສູງຫ້າສິບສອກ" ກະສັດກ່າວວ່າ "ແຂວນມັນໄວ້ເທິງນັ້ນແຫຼະ" [10]ພວກເຂົາກໍແຂວນຮາມານເທິງບ່ອນແຂວນຄໍຊຶ່ງລາວໄດ້ຕຽມໄວ້ສຳລັບມໍເດກາຍ ແລ້ວຄວາມຮ້າຍຂອງກະສັດກໍສງົບລົງ.*

ດຽວນີ້ ໃນເມື່ອເອສະເທີໄດ້ວາງແຜນ, ອະທິຖານ, ຖືສິນອົດອາຫານ, ແລະສຸດທ້າຍກໍໄດ້ເວົ້າອອກໄປ, ຕໍ່ໄປແມ່ນຫຍັງ ? ພຣະນາງບໍ່ສາມາດເຮັດຫຍັງ ມີແຕ່ລໍຖ້າ. ແຕ່ພຣະນາງບໍ່ຄອນລໍນານເກີນໄປ!

ປະວັດສາດບັນທຶກວ່າກະສັດເປັນທີ່ຮູ້ຈັກກັນດີໃນດ້ານຄວາມໂກດຂອງພຣະອົງ. ຫຼາຍຄັ້ງ, ພຣະອົງສາມາດເປັນຄົນບໍ່ຫຸ່ນຫ່ຽງ ແລະເປັນຄົນຕັດສິນໃຈອາຄາດແຄ້ນ. ຈົ່ງພິຈາຣະນາເບິ່ງວ່າພຣະອົງປະຖິ້ມພຣະຣາຊີນີວາຊາຕີຢ່າງງ່າຍດາຍຢ່າງໃດ ຍ້ອນວ່າພຣະນາງປະຕິເສດບໍ່ເຂົ້າຮ່ວມຂະບວນແຫ່ຕໍ່ໜ້າຄົນອື່ນ (ເບິ່ງເອສະເທີ 1:10-21), ແລະພຣະອົງໄດ້ເຊັນຮັບຮອງແຜນການທຳລາຍລ້າງຂອງຮາມານຢ່າງໄຮ້ສະຕິ (ເອສະເທີ 3:7-14). ນັ້ນເປັນບຸກຄົນປະເພດທີ່ທ່ານບໍ່ຢາກເສັຽໃຈ, ແລະໃນຂະນະນີ້, ຄວາມໂກດຂອງກະສັດພຸ່ງຂຶ້ນ.

ຢ່າດ່ວນສລຸບເອົາວ່າກະສັດຮູ້ວ່າຈະເຮັດຢ່າງໃດໃນທັນທີນັ້ນ. ພວກເຮົາກໍເຄີຍມີສະພາບເຊັ່ນນັ້ນ ເມື່ອຄວາມໂກດຮ້າຍຄອບງຳຄວາມຄິດຂອງເຮົາ. ບາງທີອາດເປັນເພາະເຫດນັ້ນກະສັດຈຶ່ງຍ່າງອອກຈາກຫ້ອງໄປ: ພຣະອົງຕ້ອງການໄປໃຫ້ຫ່າງຈາກຄົນທີ່ໂກດແຄ້ນພຣະອົງ ເພື່ອພຣະອົງຈະໄດ້ຊຳຣະຄວາມຄິດຂອງພຣະອົງ. ພຣະອົງຕ້ອງຕັດສິນໃຈຢ່າງນຶ່ງ ທີ່ບໍ່ມີຄົນອື່ນໃດສາມາດຕັດສິນໃຈໃຫ້ພຣະອົງ. ບັນດາທີ່ປຶກສາຂອງພຣະອົງລ້ວນແຕ່ໄຮ້ປັນຍາ ແລະພຣະອົງບໍ່ສາມາດຖາມຮາມານໄດ້ອີກ, ເພາະຮູ້ວ່າລາວຄືຕົວບັນຫາ!

ເຖິງແມ່ນວ່າພຣະອົງບໍ່ມີທີ່ປຶກສາມະນຸດຄົນໃດພໍເພິ່ງອີງໄດ້, ອົງພຣະຜູ້ເປັນເຈົ້າຜູ້ຄອບຄອງຈັກກວານບໍ່ໄດ້ຂາດໃນວັນນັ້ນ. *"[1] ນ້ຳພຣະທັຍຂອງກະສັດເປັນເໝືອນແມ່ນ້ຳ ໃນພຣະຫັດຂອງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າຈະຫັນໄປທາງໃດ ກໍຕາມແຕ່ພຣະອົງຊົງໂຜດ"(ສພສ 21:1).* ກະສັດເຊເຊັດເຄີຍມີປວັດການຕັດສິນໃຈບໍ່ຮອບຄອບມາ, ແຕ່ໃນຂະນະນີ້, ພຣະອົງໄດ້ເລືອກທາງຖືກຕ້ອງ. ພຣະອົງໄດ້ເອົາສັດຕຣູຜູ້ນີ້ອອກໄປຈາກປະຊາຊົນສູ່ຄວາມຕາຍ, ແລະໃນບໍ່ຊ້າ ພຣະອົງຈະຊົງປະທານອຳນາດແກ່ຊາວຢິວໃຫ້ລຸກຂຶ້ນຕໍ່ຕ້ານພວກທີ່ຫາທາງທຳລາຍພວກເຂົາ.

ບັດນີ້ໃນເມື່ອລາວຖືກເປີດໂປງແລ້ວ, ຮາມານກໍຕົກໃຈຢ້ານການແກ້ແຄ້ນທີ່ຊອບທັມ. ໃນສະພາບໝົດຫວັງ, ລາວໄດ້ຄຸເຂົ່າທູນຂໍຊີວິດວອນຂໍຄວາມເມດຕາຈາກພຣະຣາຊີນີ, ຊ່າງກົງກັນຂ້າມທີ່ຮາມານໄດ້ຮວບຮວມເອົາສິ່ງທັງໝົດນີ້ໃສ່ຕົວຍ້ອນຄົນຢິວຜູ້ນຶ່ງບໍ່ຍອມກົ້ມຫົວໃຫ້ລາວ,ແຕ່ບັດນີ້ລາວກັບເປັນຝ່າຍກົ້ມຫົວໃຫ້ຄົນຢິວ. ທາງກົງກັນຂ້າມຍັງສິ່ງ

ຜົນສະທ້ອນຕໍ່ໄປ ຄືບ່ອນແຂວນຄໍຊຶ່ງຮາມານໄດ້ສ້າງໄວ້ສັງຫານສັດຕຣູຂອງລາວ ກັບຖືກນໍາມາໃຊ້ແຂວນຄໍລາວເອງ.

ການພົບເຫັນຄົນເຈັບປວດ, ຖືກຂົ່ມເຫັງ, ຫຼືຖືກເອົາລັດເອົາປຽບຈ່ອງດຶງຫົວໃຈເຮົາ. ພວກເຮົາຢາກເຫັນຜູ້ຮັບເຄາະໄດ້ຮັບຄວາມເປັນທັມ, ໂທດທັນຖືກປົດປ່ອຍ, ແລະ ການພິພາກສາຖືກນໍາມາໃຊ້. ພວກເຮົາເຮັດເພື່ອຄົນອື່ນໃນສິ່ງທີ່ເຮົາສາມາດເຮັດໄດ້, ແຕ່ເຮົາຕ້ອງມອບການແກ້ແຄ້ນໄວ້ໃນພຣະຫັດຂອງພຣະເຈົ້າ.

*ມີຜົນດີແນວໃດຕໍ່ການມອບການແກ້ແຄ້ນໄວ້ໃນພຣະຫັດຂອງພຣະເຈົ້າ ?*

ການພິພາກສາຂອງພຣະເຈົ້າຈະມາ ແລະບໍ່ພຽງແຕ່ຕໍ່ສູ້ພວກຂອງຮາມານໃນໂລກນີ້. ໃນຄວາມເປັນຈິງ ພວກເຮົາທຸກຄົນກໍເປັນຄືຮາມານນັ້ນແຫຼະ; ແກນໃນຂອງເຮົາ, ພວກເຮົາໄດ້ຕາຍໃນຄວາມບາບຂອງເຮົາແລ້ວ ແລະໄດ້ຮັບການທົດລອງ ໃນອໍານາດ, ຕັນຫາ, ແລະ ຄວາມໂລບ. ພວກເຮົາບໍ່ໄດ້ເປັນຄົນດີ ແລະ ບໍ່ແມ່ນເຈົ້າຊຸນມຸນນາຍ ຊຶ່ງເຮົາຄິດວ່າເຮົາເປັນ, ພວກເຮົາທຸກຄົນເປັນຄົນບາບສົມຄວນຕາຍທັງນັ້ນ (ໂຣມ 6:23 ).

ເໝືອນດັ່ງຮາມານ, ພວກເຮົາສາມາດກົ້ມຫົວລົງຕໍ່ພຣະພັກຂອງກະສັດ, ອ້ອນວອນຂໍຄວາມເມດຕາ ໃນຄວາມບາບ ແລະຄວາມຜິດຂອງເຮົາທີ່ໄດ້ກະທໍາຕໍ່ສູ້ພຣະອົງ. ແຕ່ບໍ່ເໝືອນຮາມານ, ພວກເຮົາມີຜູ້ອາສາຢືນຂຶ້ນແທນບ່ອນເຮົາ ແລະປະເຊີນການພິພາກສາເພື່ອເຮົາ. ພຣະເຢຊູໄດ້ໄປທີ່ກາງແຂນ ພວກເຮົາຈຶ່ງໄດ້ຮັບພຣະເມດຕາຂອງພຣະເຈົ້າ. ມີຫຼັງອີກແດ່, ໂດຍການຄືນພຣະຊົນຂອງພຣະອົງ, ພຣະເຢຊູໄດ້ເອົາຊນະຄວາມເສື່ອມໂຊມ ຊຶ່ງລຸກລາມໃນໃຈມະນຸດເຮົາ. ຜົນປາກົດຄື ພວກເຮົາໄດ້ມີຊີວິດ!

*ບ່ອນໃດທີ່ພວກເຮົາມີໂອກາດສະແດງຄວາມກ້າຫານກ່ຽວກັບຄວາມຍຸດຕິທັມ ໃນຊຸມຊົນຂອງເຮົາ?*

## ນໍາໃຊ້ໃນຊີວິດ

ບາດກ້າວໃດທ່ານຈະຢືນຂຶ້ນເພື່ອຄົນອື່ນ? ຈົ່ງເລືອກການນໍາໃຊ້ຕໍ່ໄປນີ້:

- **ອະທິຖານ.** ທູນຂໍພຣະເຈົ້າເປີດເຜີຍທາງທີ່ທ່ານສາມາດໃຊ້ສິ່ງທີ່ພຣະອົງໄດ້ປະທານໃຫ້ທ່ານ ເວລາ, ຊັບສົມບັດ, ອິດທິພົນ, ແລະຕໍາແໜ່ງ ເພື່ອລຸກຂຶ້ນເວົ້າຕໍ່ຕ້ານຄວາມຊົ່ວຮ້າຍ ແລະຄວາມບໍ່ເປັນທັມໃນສັງຄົມ.
- **ເບິ່ງ.** ຈົ່ງເຮັດການວິຈັຍຫາໂອກາດໃນຊຸມຊົນທີ່ທ່ານອາສັຍຢູ່ເພື່ອຊ່ອຍຕໍ່ສູ້ຄວາມອະຍຸດຕິທັມ.
- **ກະທໍາ.** ຖາມະກຸ່ມ, ອະທິຖານຢ່າງເຕັມທີ່ ພິຈາຣະນາສິ່ງທີ່ທ່ານສາມາດເຮັດໄດ້ ບໍ່ວ່າຜ່ານທາງຄຣິສຕະຈັກທ້ອງຖິ່ນ ຫຼືອົງການທ້ອງຖິ່ນທີ່ວາງໃຈໄດ້ ເພື່ອຊ່ອຍເຮັດໃຫ້ແຕກຕ່າງໃນຂົງເຂດທີ່ພຣະເຈົ້າເອີ້ນທ່ານຮັບໃຊ້.

ທ່ານອາດບໍ່ເປັນຄົນມີຄວາມຊໍານິຊໍານານໃນການເວົ້າໃນທີ່ສາທາຣະນະ, ແຕ່ເຮົາທຸກຄົນໄດ້ຮັບສຽງປະທານຊຶ່ງພຣະເຈົ້າຢາກໃຫ້ເຮົາໃຊ້ ໃຫ້ເປັນເກືອ ແລະແສງສວ່າງໃນໂລກນີ້. ຈົ່ງກ້າຫານ ແຕ່ຈົ່ງມອບຜົນຮັບໄວ້ໃນພຣະຫັດຂອງພຣະເຈົ້າ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**